**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສຳນັກງານນາຍົກລັດຖະມົນຕີ ເລກທີ...173........./ ນຍ

ນະຄອນຫຼວງວຽງຈັນ, ວັນທີ 11.06.2007

# ດຳລັດ

## ກ່ຽວກັບການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍພາສີທີ່ດິນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2007.
- ອີງຕາມກົດໝາຍ ວ່າດ້ວຍທີ່ດິນ ສະບັບປັບປຸງໃໝ່ ເລກທີ 04/ສພຊ, ລົງວັນທີ 21/10/2003.
- ອີງຕາມລັດຖະບັນຍັດຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍພາສີທີ່ດິນ ສະບັບເລກທີ 01/ສປປ, ລົງວັນທີ 8 ພຶດສະພາ 2007.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 1236/ກງ, ລົງວັນທີ 01 ມິຖຸນາ 2007.

**ນາຍົກລັດຖະມົນຕີ ອອກດຳລັດ :**

<u>ມາດຕາ 1</u> : ປະກາດໃຊ້ ແລະ ຈັດຕັ້ງປະຕິບັດລັດຖະບັນຍັດຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍພາສີທີ່ດິນ ສະບັບເລກທີ 01/ສປປ, ລົງວັນທີ 8/5/2007.

<u>ມາດຕາ 2</u> : ມອບໃຫ້ທ່ານລັດຖະມົນຕີວ່າການ ກະຊວງການເງິນ ອອກບົດແນະນຳຈັດຕັ້ງປະຕິບັດລະອຽດ.

<u>ມາດຕາ 3</u> : ບັນດາກະຊວງ, ອົງການທຽບເທົ່າ, ອຳນາດການປົກຄອງທ້ອງຖິ່ນໃນທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 01/ສປປ, ລົງວັນທີ 8/5/2007, ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ.

<u>ມາດຕາ 4</u> : ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດລັດຖະບັນຍັດ ວ່າດ້ວຍພາສີທີ່ດິນ ສະບັບເລກທີ 150/ນຍ, ລົງວັນທີ 22/10/2000. ບັນດາດຳລັດ, ຂໍ້ກຳນົດ ແລະ ກົດລະບຽບໃດທີ່ຂັດກັບລັດຖະບັນຍັດສະບັບເລກທີ 01/ສປປ, ລົງວັນທີ 8/5/2007 ລ້ວນແຕ່ຖືກລົບລ້າງ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ